**ມິຊຊາອາທິດທີ 1 ກຳນົດບຳເພັນສິນ ປີ C**

**ວັນທີ 10 ມີນາ 2019**



**ພຣະວໍລະສານໂດຍນັກບຸນລູກາ 4, 1-13**

ໃນເວລານັ້ນ, ພຣະເຢຊູເຈົ້າເຕັມພຽບດ້ວຍພຣະຈິດເຈົ້າຈຶ່ງສະເດັດຈາກຝັ່ງແມ່ນ້ຳຢໍແດນ. ພຣະຈິດໄດ້ພາພຣະອົງໄປຍັງໂຄກປ່ຽວ. ພຣະອົງປະທັບຢູ່ທີ່ນັ້ນ 40 ມື້ ແລະຖືກຜີປີສາດມາຫລອກລວງ. ຕະຫລອດເວລານັ້ນພຣະອົງບໍ່ໄດ້ຮັບປະທານຫຍັງເລີຍ. ເມື່ອລ່ວງໄປ 40 ວັນແລ້ວພຣະອົງກໍຊົງຫິວໂຫຍເຕັມທີ. ຜີປີສາດຈຶ່ງທູນພຣະອົງວ່າ: ຖ້າທ່ານແມ່ນບຸດຂອງພຣະເຈົ້າແລ້ວ, ຈົ່ງບອກໃຫ້ກ້ອນຫີນກ້ອນນີ້ກາຍເປັນເຂົ້າຈີ່ເຖີດ. ພຣະເຢຊູເຈົ້າຕອບວ່າ: ມີຄຳຂຽນໄວ້ວ່າ: *ມະນຸດມີຊີວິດຢູ່ໄດ້ບໍ່ແມ່ນຍ້ອນເຂົ້າຈີ່ເທົ່ານັ້ນ*.

ຜີປີສາດຈຶ່ງພາພຣະອົງໄປຍັງທີ່ສູງແລະສະແດງໃຫ້ເຫັນອານາຈັກທັງຫລາຍໃນໂລກໄລຍະໜຶ່ງແລ້ວທູນວ່າ: ເຮົາຈະມອບອະນຸພາບແລະກຽດມຸງຄຸນແຫ່ງອານາຈັກເຫລົ່ານີ້ໃຫ້ທ່ານ ຍ້ອນມັນແມ່ນກຳມະສິດຂອງເຮົາ, ຈະມອບໃຫ້ໃຜກໍສຸດແລ້ວແຕ່ເຮົາ. ດັ່ງນັ້ນ, ຖ້າທ່ານຂາບລົງໄຫວ້ເຮົາທຸກສິ່ງເຫລົ່ານັ້ນກໍຈະເປັນຂອງທ່ານທັງໝົດ. ພຣະເຢຊູເຈົ້າຕອບວ່າ: ມີຄຳຂຽນໄວ້ວ່າ *ຈົ່ງນະມັດສະການພຣະເຈົ້າຂອງເຈົ້າ ແລະຮັບໃຊ້ພຣະອົງແຕ່ຜູ້ດຽວ*.

ແລ້ວຜີປີສາດກໍພາພຣະອົງໄປນະຄອນເຢລູຊາແລມ, ໃຫ້ປະທັບຢູ່ເທິງຍອດວິຫານ, ມັນທູນພຣະອົງວ່າ: ຖ້າທ່ານເປັນບຸດຂອງພຣະເຈົ້າຈິງແລ້ວກໍໃຫ້ໂຕນລົງໄປເຖີດ. ຍ້ອນມີຄຳຂຽນໄວ້ວ່າ: *ພຣະເປັນເຈົ້າຈະຮັບສັ່ງໃຫ້ເທວະດາມາປ້ອງກັນທ່ານ*. ແລະອີກບ່ອນໜຶ່ງຂຽນວ່າ: *ພວກເທວະດາຈະຊ້ອນຊູທ່ານໄວ້ບໍ່ໃຫ້ຕີນຂອງທ່ານຕຳກ້ອນຫີນ*. ພຣະເຢຊູເຈົ້າຕອບວ່າ: ພຣະຄຳພີກໍຍັງກ່າວອີກວ່າ: *ເຈົ້າຢ່າມາຫລອກລວງພຣະເຈົ້າຂອງເຈົ້າ*. ເມື່ອໃຊ້ທຸກວິຖີທາງຫລອກລວງພຣະອົງແລ້ວ, ມັນກໍໜີໄປຖ້າເຖິງໂອກາດໃໝ່ຈຶ່ງຈະກັບມາອີກ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ລກ 4, 1-13**

ພວກເຮົາແຕ່ລະຄົນເມື່ອເຂົ້າສູ່ກຳນົດບຳເພັນສິນຕ່າງກໍມີຄວາມຢ້ານກົວ, ເພາະບັນຍາກາດຂອງຊ່ວງເວລານີ້ບໍ່ຄືກັບກຳນົດອື່ນ ເຊັ່ນກຳນົດພຣະກຣິສຕະຄົມອັນແມ່ນຊ່ວງເວລາແຫ່ງການລໍຖ້າການສະເດັດມາຂອງພຣະຜູ້ກູ້ໄຖ່ດ້ວຍຄວາມຊື່ນບານ. ສ່ວນກຳນົດບຳເພັນສິນເປັນຊ່ວງເວລາແຫ່ງການທໍລະມານກາຍ, ການອົດອາຫານ, ການພາວະນາ, ແລະການໃຫ້ທານ. ສະຫລຸບແລ້ວຕ້ອງໄດ້ປ່ຽນແປງຊີວິດຂອງຕົນ. ສິ່ງເຫລົ່ານີ້ທຳໃຫ້ພວກເຮົາມີຄວາມກັງວົນ, ໂສກເສົ້າແລະເບື່ອໜ່າຍ.

ຕາມຈິງແລ້ວ, ກຳນົດບຳເພັນສິນເປັນຊ່ວງເວລາທີ່ພວກເຮົາພ້ອມກັບພຣະເຢຊູເຈົ້າເຂົ້າໄປໃນທີ່ປ່ຽວພາຍໃຕ້ການນຳພາຂອງພຣະຈິດເພື່ອຢູ່ກັບພຣະອົງເປັນເວລາ 40 ວັນ. ແນ່ນອນ, ພາຍໃນໄລຍະເວລານີ້ພວກເຮົາຈະຕ້ອງປະເຊີນໜ້າກັບການປະຈົນຫລອກລວງຕ່າງໆນາໆ ແຕ່ພວກເຮົາບໍ່ໄດ້ຕໍ່ສູ້ກັບສິ່ງຫລອກລວງເຫລົ່ານີ້ຕົວຄົນດຽວ ເພາະພວກເຮົາມີພຣະເຢຊູເຈົ້າຢູ່ຄຽງຂ້າງເພື່ອຊ່ວຍພວກເຮົາໃຫ້ຜ່ານຜ່າການທົດສອບເຫລົ່ານີ້ເພື່ອມຸ່ງສູ່ເສັ້ນໄຊອັນແມ່ນວັນບຸນປາສກາ.

ແຕ່ຄຳຖາມທີ່ຕາມມາຄື ການປະຈົນຫລອກລວງທີ່ພວກເຮົາຈະພົບນັ້ນແມ່ນຫຍັງ? ວາຈາຂອງພຣະເຈົ້າໃນວັນນີ້ໄດ້ນຳສະເໜີໃຫ້ພວກເຮົາຮູ້ສິ່ງທີ່ພວກເຮົາຕ້ອງປະເຊີນໜ້າເໝືອນກັບພຣະເຢຊູເຈົ້າໃນຊ່ວງເວລາ 40 ວັນນີ້ຄື:

ການປະຈົນຫລອກລວງດ້ານອາຫານການກິນ. ຜີປີສາດກ່າວກັບພຣະເຢຊູເຈົ້າວ່າ: *« ຖ້າທ່ານແມ່ນບຸດຂອງພຣະເຈົ້າແລ້ວ, ຈົ່ງບອກໃຫ້ກ້ອນຫີນກ້ອນນີ້ກາຍເປັນເຂົ້າຈີ່ເຖີດ ».* ຄຳເວົ້າຂອງຜີປີສາດນີ້ບໍ່ໄດ້ມີຈຸດປະສົງແຕ່ຢາກຫລອກລວງພຣະເຢຊູເຈົ້າກ່ຽວກັບເລື່ອງອາຫານການກິນເທົ່ານັ້ນ ແຕ່ມັນຢາກໃຫ້ພຣະເຢຊູເຈົ້າທຳລາຍແຜນການຂອງພຣະບິດາເຈົ້າໂດຍການໃຊ້ລິດເດດຂອງພຣະອົງເພື່ອອອກຈາກສະພາບການເປັນມະນຸດ. ດັ່ງນັ້ນ, ພຣະເຢຊູເຈົ້າຈຶ່ງຕອບຜີປີສາດວ່າ: *« ມະນຸດມີຊີວິດຢູ່ໄດ້ບໍ່ແມ່ນຍ້ອນເຂົ້າຈີ່ເທົ່ານັ້ນ ».* ແຕ່ຍ້ອນວາຈາທີ່ອອກຈາກປາກພຣະເຈົ້າ. ຄຳເວົ້າຂອງພຣະເຢຊູເຈົ້ານີ້ຢາກສອນພວກເຮົາຫຍັງ? ພວກເຮົາໄດ້ໃຫ້ເວລາກັບວາຈາຂອງພຣະເຈົ້າໃນຊີວິດຂອງພວກເຮົາບໍ? ຫລືພວກເຮົາໃຫ້ເວລາກັບການທຳມາຫາກິນ, ການຫລິ້ນກິນມ່ວນຊື່ນ, ການແລ່ນນຳວັດຖຸສິ່ງຂອງໆໂລກນີ້ ຫລາຍກວ່າການຢູ່ກັບພຣະເຈົ້າຜ່ານທາງວາຈາຂອງພຣະອົງ?

ສິ່ງທີສອງຊຶ່ງພວກເຮົາຕ້ອງປະເຊີນໜ້າໃນຊ່ວງ 40 ວັນນີ້ຄື: ຄວາມເຊື່ອ**.** ຜີປີສາດກ່າວກັບພຣະເຢຊູເຈົ້າວ່າ: *« ເຮົາຈະມອບອະນຸພາບແລະກຽດມຸງຄຸນແຫ່ງອານາຈັກເຫລົ່ານີ້ໃຫ້ທ່ານ... ຖ້າທ່ານຂາບລົງນົບໄຫວ້ເຮົາ ».* ຜີປີສາດໄດ້ມາແທນບ່ອນຂອງພຣະເຈົ້າພຣະຜູ້ສ້າງໂດຍຖືວ່າສັບພະສິ່ງທີ່ຢູ່ໃນໂລກນີ້ບໍ່ໄດ້ຖືກສ້າງມາຈາກພຣະເຈົ້າແຕ່ມາຈາກອຳນາດຂອງຊາຕານ. ແຕ່ພຣະເຢຊູເຈົ້າໄດ້ຢັ້ງຢືນຄວາມຈິງກັບຜີປີສາດວ່າ: *« ຈົ່ງນະມັດສະການພຣະເຈົ້າຂອງເຈົ້າ ແລະຮັບໃຊ້ພຣະອົງແຕ່ຜູ້ດຽວ ».* ວາຈາຂອງພຣະເຢຊູເຈົ້າໃນທີ່ນີ້ຢາກສອນພວກເຮົາຫຍັງ? ໃນສັງຄົມເສດຖະກິດປັດຈຸບັນຂອງພວກເຮົານີ້, ພວກເຮົາເຊື່ອແລະແລ່ນຕາມກະແສຂອງການວິວັດທະນາການດ້ານວັດຖຸນິຍົມ ແລະຫລາຍຄັ້ງພວກເຮົາຄິດວ່າສັບພະສິ່ງທັງຫລາຍລວມທັງພວກເຮົາເອງບໍ່ໄດ້ຖືກສ້າງມາຈາກພຣະເຈົ້າ ແຕ່ມາຈາກມະນຸດ. ຜົນທີ່ຕາມມາຄືພວກເຮົາຄິດວ່າຕົນມີສິດເໜືອທຸກສິ່ງແລະເໜືອທຸກຄົນຈຶ່ງພາໃຫ້ເກີດສົງຄາມ, ການທຳລາຍທຳມະຊາດແລະຮ້າຍແຮງໄປກວ່ານັ້ນຄືການຂ້າຄົນ, ການຂ້າລູກໃນທ້ອງຂອງຕົນ. ແຕ່ຖ້າເຮົາຫັນໄປຫາພຣະເຈົ້າພຣະຜູ້ສ້າງທີ່ແທ້ຈິງຂອງພວກເຮົາແລະເຊື່ອໄວ້ວາງໃຈນຳພຣະອົງແຕ່ຜູ້ດຽວແລ້ວ, ແນ່ນອນພວກເຮົາຈະມີທ່າທີການກະທຳທີ່ແຕກຕ່າງໄປຈາກໂລກນີ້.

ການປະຈົນທີສາມຄືການຂາດຄວາມຄວາມເຊື່ອໃນພຣະເຈົ້າ. ໃນຊີວິດຄວາມເຊື່ອຂອງພວກເຮົາ, ພວກເຮົາມັກຈະທົດສອບພຣະເຈົ້າດ້ວຍຫລາຍຮູບຫລາຍແບບເຊັ່ນ: ຖ້າພຣະເຈົ້າຮັກຂ້ອຍແທ້, ພຣະອົງຕ້ອງໃຫ້ຂ້ອຍເສັງໄດ້ ແຕ່ຖ້າຂ້ອຍເສັງບໍ່ໄດ້ຂ້ອຍຈະບໍ່ເຊື່ອພຣະອົງອີກ. ຫລືຖ້າພຣະເຈົ້າຮັກຂ້ອຍຈິງ ພຣະອົງຕ້ອງໃຫ້ຂ້ອຍຫາຍຈາກພະຍາດໂລຄາ, ບໍ່ດັ່ງນັ້ນຂ້ອຍຈະບໍ່ເຊື່ອພຣະອົງອີກ. ແຕ່ໃນວັນນີ້ພຣະເຢຊູເຈົ້າສອນພວກເຮົາວ່າ: *« ເຈົ້າຢ່າມາຫລອກລວງພຣະເຈົ້າຂອງເຈົ້າ ».* ແຕ່ຈົ່ງເຊື່ອໃນພຣະເຈົ້າ ເພາະທຸກສິ່ງເປັນໄປໄດ້ສຳລັບພຣະອົງ.

ຂໍໃຫ້ກຳນົດບຳເພັນສິນນີ້ເປັນໂອກາດປະເສີດເພື່ອພວກເຮົາຈະໄດ້ເບິ່ງຄືນຕົວເອງແລະຊີວິດຄວາມເຊື່ອຂອງພວກເຮົາ. ເພື່ອວ່າພວກເຮົາຈະໄດ້ພ້ອມກັບພຣະເຢຊູເຈົ້າສະຫລອງໄຊຊະນະເໜືອບາບແລະຄວາມຕາຍໃນວັນບຸນປາສກາທີ່ຈະມາເຖິງ.
ອາແມນ.

ຄຸນພໍ່ ອັງຕວນ ກຽດຕິສັກ